ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-------------------------------------

ກະຊວງກະສິກຳ ແລະ ປ່າໄມ້
ກົມປູກຝັງ

ເລກທີ 0612 /ກປຝ
ນະຄອນຫຼວງວຽງຈັນ, 10 APR 2013

# ແຈ້ງການແນະນຳ

**ຮຽນ:** ທ່ານ ຫົວໜ້າ ຂະແໜງປູກຝັງ ນະຄອນຫລວງ ແລະ ແຂວງ ໃນຂອບເຂດທົ່ວປະເທດ

**ເລື່ອງ:** ຂໍ້ກຳນົດດ້ານສຸຂານາໄມພືດຂອງ ປະເທດໃນກຸ່ມສະຫະພາບເອີລົບສຳລັບການນຳເຂົ້າບາງພືດທີ່ສຳຄັນ ຈາກ ສປປ ລາວ

- ອີງຕາມ ກົດໝາຍ ວ່າດ້ວຍການປ້ອງກັນພືດ ສະບັບເລກທີ 06/ສພຊ, ລົງວັນທີ 09 ທັນວາ 2008;
- ອີງຕາມ ດຳລັດ ແນະນຳປະຕິບັດກົດໝາຍ ວ່າດ້ວຍ ການປ້ອງກັນພືດ ສະບັບເລກທີ 229/ລບ, ລົງວັນທີ 31 ພຶດສະພາ 2012;
- ອີງຕາມລະບຽບແຈ້ງການຂອງ ສະຫະພາບເອີລົບ COUNCIL DIRECTIVE 2000/29/EC ລົງວັນທີ 8/5/2000;

ກົມປູກຝັງ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ໃນໄລຍະຜ່ານມາ ການສົ່ງອອກພືດຜັກໄປປະເທດໃນກຸ່ມສະຫະພາບເອີລົບໄດ້ ຖືກຜົນກະທົບ ຈາກນຳໃຊ້ມາດຕະການ SPS ໂດຍສິນຄ້າໄດ້ຖືກທຳລາຍຖິ້ມຈຳນວນບໍ່ໜ້ອຍ ຍ້ອນສາເຫດ ການອອກ ໃບຢັ້ງຢືນ ສຸຂານາໄມພືດ ຍັງບໍ່ທັນຖືກຕ້ອງ ຕາມມາດຕະຖານສາກົນດ້ານສຸຂານາໄມພືດ (ISPMs, IPPC) (ສະບັບທີ 7: ລະບົບການຢັ້ງຢືນການສົ່ງອອກ), (ສະບັບທີ 12: ຄູ່ມືສຳລັບໃບຢັ້ງຢືນສຸຂານາໄມພືດ) ແລະ ບໍ່ສອດຄ່ອງກັບລະບຽບຂໍ້ກຳນົດເງື່ອນໄຂສະເພາະໃນການນຳເຂົ້າ ຂອງ ສະຫະພາບເອີລົບ ຈຶ່ງເຮັດໃຫ້ເກີດຄວາມເສຍຫາຍຕໍ່ຜູ້ນຳເຂົ້າ ແລະ ຜູ້ສົ່ງອອກຈາກ ສປປ ລາວ.

ດັ່ງນັ້ນ, ເພື່ອອຳນວຍຄວາມສະດວກ ແລະ ສ້າງຄວາມເຂົ້າໃຈໃຫ້ແກ່ພະນັກງານ ແລະ ເຈົ້າໜ້າທີ່ປ້ອງກັນພືດ ໃນການອອກໃບຢັ້ງຢືນສຸຂານາໄມພືດ ເພື່ອສົ່ງສິນຄ້າກະສິກຳ ໄປຍັງສະຫະພາບເອີລົບ ໃຫ້ມີຄວາມ ຖືກຕ້ອງ ແລະ ສອດຄ່ອງກັບຂໍ້ກຳນົດເງື່ອນໄຂການນຳເຂົ້າຂອງ ສະຫະພາບ ເອີລົບ ກົມປູກຝັງ ຈຶ່ງໄດ້ອອກແຈ້ງການແນະນຳ ດັ່ງນີ້:

1. ປະເທດນຳເຂົ້າ ນອນຢູ່ໃນສະຫະພາບເອີລົບ ທີ່ບັງຄັບໃຊ້ຂໍ້ກຳນົດໃນແຈ້ງການສະບັບນີ້ ປະກອບມີ: Austria (A), Belgium, Bulgaria*, Cyprus* (CY), Czech Republic* (CZ), Denmark (DK), Estonia* (ES), Finland (FI), France (F), Germany, Greece (EL), Hungary* (HU), Ireland

(IRL), Italy (I), Latvia* (LV), Lithuania* (LT), Luxembourg, Malta* (M), Netherlands, Poland* (PL), Portugal (including Azores) (P), Romania*, Slovenia* (SL), Spain (including Canary Islands) (E), Sweden (S), The Slovak Republic* (SV), United Kingdom (Great Britain including Northern Ireland, Isle of Man and Channel Islands) (UK).

**ໝາຍເຫດ:** ເຄື່ອງໝາຍ (*) ແມ່ນບັນດາປະເທດທີ່ເຂົ້າເປັນສາມະຊິກໃໝ່ຂອງ ສະຫະພາບເອີລົບ, ສະນັ້ນ ການສົ່ງອອກໄປປະເທດດັ່ງກ່າວແມ່ນຜູ້ສົ່ງອອກຈຳເປັນຕ້ອງຊອກຫາຂໍ້ມູນຢັ້ງຢືນເພີ່ມຕື່ມກ່ຽວກັບເງື່ອນໄຂ ການນຳເຂົ້າຕົວຈິງ.

2. ພືດທີ່ຈະສົ່ງໄປປະເທດຕ່າງໆທີ່ກຳນົດໄວ້ ໃນຂໍ້ 1 ຂອງແຈ້ງການສະບັບນີ້ ຕ້ອງໄດ້ຮັບການກວດກາ ແລະ ຢັ້ງຢືນສຸຂານາໄມພືດ ຕາມແບບຮ່າງບົດແນະນຳ ເລກທີ. 1077/ກປຜ, ລົງວັນທີ 30/09/2010 ໂດຍ ປະຕິບັດຕາມຂໍ້ກຳນົດສະເພາະດ້ານສຸຂານາໄມພືດ ຕາມແຕ່ລະຊະນິດພືດດັ່ງຕາຕະລາງລຸ່ມນີ້:

| ລ/ດ | ຊື່ພືດ ແລະ ຜະລິດຕະພັນພືດ | ຂໍ້ກຳນົດດ້ານສຸຂານາໄມພືດໃນການນຳເຂົ້າຂອງສະຫະພາບເອີລົບ |
|---|---|---|
| I. | <u>ໝວດພືດຜັກ</u> | |
| 1. | 1.1 ຊື່ພາສາລາວ: ຜັກອີຕູ່, ກະເພົາ<br>ຊື່ພາສາອັງກິດ: Holy basil<br>ຊື່ວິທະຍາສາດ: *Ocimum tenuiflorum*<br>1.2 ຊື່ພາສາລາວ: ຜັກບົວລະພາ<br>ຊື່ພາສາອັງກິດ: Sweet basil<br>ຊື່ວິທະຍາສາດ: *Ocimum basilicum*<br>1.3 ຊື່ພາສາລາວ: ຜັກບົວລະພາ<br>ຊື່ພາສາອັງກິດ: Sweet basil<br>ຊື່ວິທະຍາສາດ: *Ocimum gratisimum* | 1.ຕ້ອງບໍ່ມີການຕິດແປດຂອງສັດຕູພືດດັ່ງນີ້:<br>*(1) Amauromyza maculosa* (Malloch)<br>*(2) Liriomyza sativae* (Blanchard)<br>*(3) Bemisia tabaci* Genn.<br>2. ພິມຂໍ້ຄວາມເພີ່ມ (Additional Declaration) ໃສ່ໃນໃບຢັ້ງຢືນສຸຂານາໄມພືດຄື: Consignment complies with Annex IV.A.I,point 32.2(b) and 45.2(b) of EC Plant Health Directive 2000/29/EC |
| 2 | ຊື່ພາສາລາວ: ຜັກແຂນເລີລີ<br>ຊື່ພາສາອັງກິດ: Celery<br>ຊື່ວິທະຍາສາດ: *Apium graveolens* | 1.ຕ້ອງບໍ່ມີການຕິດແປດຂອງສັດຕູພືດດັ່ງນີ້:<br>*(1) Amauromyza maculosa* (Malloch),<br>*(2) Liriomyza sativae* (Blanchard)<br>2.ພິມຂໍ້ຄວາມເພີ່ມ (Additional Declaration) ໃສ່ໃນໃບຢັ້ງຢືນສຸຂານາໄມພືດຄື: Consignment complies with Annex IV.A.I, point 32.2(b) of EC Plant Health Directive 2000/29/EC |
| 3 | ຊື່ພາສາລາວ: ຜັກຫອມເທບ (ຫຼື ຜັກຫອມເປ)<br>ຊື່ພາສາອັງກິດ: Stinking<br>ຊື່ວິທະຍາສາດ: *Eryngium foetidum* | 1.ຕ້ອງບໍ່ມີການຕິດແປດຂອງສັດຕູພືດດັ່ງນີ້:<br>*Bemisia tabaci* Genn.<br>2. ພິມຂໍ້ຄວາມເພີ່ມ (Additional Declaration) ໃສ່ໃນ ໃບຢັ້ງຢືນ ສຸຂານາໄມພືດຄື: Consignment complies with Annex IV.A.I, point 45.2(b) of EC Plant Health |

| | | |
|---|---|---|
| | | Directive 2000/29/EC. |
| 4 | 4.1 ຊື່ພາສາລາວ: ໝາກໄຊ່, ໝາກມະລະ<br>ຊື່ພາສາອັງກິດ: Bitter Melon<br>ຊື່ວິທະຍາສາດ: *Momordica charantia*<br>4.2 ຊື່ພາສາລາວ: ໝາກເຂືອປ້ອມ, ໝາກເຂືອມ່ວງ<br>ຊື່ພາສາອັງກິດ: Eggplant<br>ຊື່ວິທະຍາສາດ: *Solanum melongena* | 1.ຕ້ອງບໍ່ມີການຕິດແປດຂອງສັດຕູພືດດັ່ງນີ້:<br>*Thrips palmi* Karny.<br>2. ພິມຂໍ້ຄວາມເພີ່ມ (Additioñສ Declaration) ໃສ່ໃນໃບຢັ້ງຢືນ ສຸຂານາໄມພືດຄື: Consignment complies with Annex IV.A.I, point 36.2(b) of EC Plant Health Directive 2000/29/EC. |
| II. | ໝວດພືດປະດັບ | |
| 1 | ພືດໃນຕະກູນ(Family) Orchidaceae ເຊັ່ນ: ດອກກ້ວຍໄມ້, ດອກເຜິ້ງ, ດອກເອື້ອງ | 1. ຕ້ອງບໍ່ມີການຕິດແປດຂອງສັດຕູພືດດັ່ງນີ້:<br>*(1) Thrips palmi* Karny.<br>2. ພິມຂໍ້ຄວາມເພີ່ມ (Additional Declaration) ໃສ່ໃນໃບຢັ້ງຢືນ ສຸຂານາໄມພືດຄື: Consignment complies with the Directive 2000/ 29/ EC and the Decision 98/ 109(b); |
| 2 | ພືດໃນຕະກູນ (Genus) ດັ່ງຕໍ່ໄປນີ້:<br>2.1 *Dendranthema* spp.<br>2.2 *Dianthus* spp. | 1. ຕ້ອງບໍ່ມີການຕິດແປດຂອງສັດຕູພືດດັ່ງນີ້:<br>*(1) Amauromyza maculosa* (Malloch),<br>*(2) Liriomyza sativae* (Blanchard)<br>2. ພິມຂໍ້ຄວາມເພີ່ມ (Additional Declaration)ໃສ່ໃນ ໃບຢັ້ງຢືນ ສຸຂານາໄມພືດຄື: Consignment complies with Annex IV.A.I, point 32.2(b) of EC Plant Health Directive 2000/29/EC. |
| 3 | ພືດໃນຕະກູນ (Genus) ດັ່ງຕໍ່ໄປນີ້:<br>3.1 *Aster* spp.<br>3.2 *Eryngium* spp.<br>3.3 *Rosa* spp. ເຊັ່ນ ຕົ້ນກຸຫຼາບ<br>3.4 *Trachelium* spp.<br>3.5 *Hypericum* spp.<br>3.6 *Lisianthus* spp. | 1. ຕ້ອງບໍ່ມີການຕິດແປດຂອງສັດຕູພືດດັ່ງນີ້:<br>*(1) Bemisia tabaci* Genn.<br>2. ພິມຂໍ້ຄວາມເພີ່ມ(Additional Declaration)ໃສ່ໃນ ໃບຢັ້ງຢືນ ສຸຂານາໄມພືດຄື: Consignment complies with Annex IV.A.I, point 45.2(b) of EC Plant Health Directive 2000/29/EC. |
| 4 | ພືດໃນຕະກູນ (Genus) ດັ່ງຕໍ່ໄປນີ້:<br>4.1 *Gypsophila* spp.<br>4.2 *Solidago* spp. | 1.ຕ້ອງບໍ່ມີການຕິດແປດຂອງສັດຕູພືດດັ່ງນີ້:<br>*(1) Amauromyza maculosa* (Malloch),<br>*(2) Liriomyza sativae* (Blanchard)<br>*(3) Bemisia tabaci* Genn.<br>2. ພິມຂໍ້ຄວາມເພີ່ມ (Additional Declaration) ໃສ່ໃນໃບຢັ້ງຢືນ ສຸຂານາໄມພືດຄື: Consignment complies with Annex IV.A.I, point 32.2(b) and 45.2(b) of EC Plant Health Directive 2000/29/EC. |
| III. | ໝວດພືດອຸດສາຫະກຳ | |
| 1 | ຊື່ພາສາລາວ: ກາເຟເມັດຕາກແຫ້ງ<br>ຊື່ພາສາອັງກິດ: Coffee bean (unroasted)<br>ຊື່ວິທະຍາສາດ: *Coffea* spp. | 1.ຕ້ອງບໍ່ໃຫ້ມີການຕິດແປດຂອງສັດຕູພືດເລົ້າສາງ, ທີ່ເປັນອັນຕະລາຍ (Harmful organism) ທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ I ແລະ II ຂອງ EC Plant Health Directive |

| | | |
|---|---|---|
| 2 | ຊື່ພາສາລາວ: ເຂົ້າສານ<br>ຊື່ພາສາອັງກິດ: Milled rice<br>ຊື່ວິທະຍາສາດ: *Oryza* spp. | 2000/29/EC ຂອງສະຫະພາບເອີລົບ ແລະ ຫ້າມບໍ່ໃຫ້ມີດິນ ຫຼື ພັດສະດຸປູກ ປົນເປື້ອນໄປນຳ.<br>2. ໃນກໍລະນີ ມີການຕິດແປດສັດຕູພືດ ຕາມທີ່ໄດ້ລະບຸໄວ້ຂ້າງເທິງນີ້ ຕ້ອງມີການຮົມຢາຂ້າເຊື້ອ ໂດຍ ບໍລິສັດຮົມຢາຂ້າເຊື້ອທີ່ ໄດ້ຈົດທະບຽນນຳກົມປູກຝັງຕາມມາດຕະຖານການຮົມຢາຂອງສະຫະພາບເອີລົບ (Phytosanitary treatments, PM 10/11 (1) and PM 10/5 (1).)<br>3.ໃນກໍລະນີ ມີການຮົມຢາຂ້າເຊື້ອໃຫ້ ປະກອບຂໍ້ມູນເພີ່ມໃສ່ໃນຂໍ້ III ການເຮັດຄວາມສະອາດ ແລະ ການຂ້າເຊື້ອ (Disinfestation and/or disinfection treatment)ໃນໃບຢັ້ງຢືນສຸຂານາໄມພືດ ເຊັ່ນ: ວັນທີຮົມຢາ, ຊະນິດສານເຄມີທີ່ໃຊ້, ໄລຍະເວລາ ແລະ ອຸນຫະພູມ, ແລະ ຄວາມເຂັ້ມຂຸ້ນຂອງສານເຄມີ. |
| 3 | ຊື່ພາສາລາວ: ເມັດທັນຍາພືດຕ່າງໆ ( ເຊັ່ນ: ໝາກມ່ວງຫິມະພານ, ສາລີ, ຖົ່ວ ແລະ ໝາກໄມ້ແຫ້ງ...)<br>ຊື່ພາສາອັງກິດ: Grain of cereal crops, dried fruits and nuts. | |

**ໝາຍເຫດ:**

- ພືດທີ່ກຳນົດໄວ້ໃນຕາຕະລາງຂ້າງເທິງນັ້ນແມ່ນຫ້າມນຳເຂົ້າເພື່ອຂະຫຍາຍພັນ.
- ນອກຈາກສັດຕູພືດ ທີ່ກຳນົດໄວ້ໃນຕາຕະລາງຂ້າງເທິງນັ້ນ, ການສົ່ງອອກພືດຕ່າງໆໄປບັນດາປະເທດໃນສະຫະພາບເອີລົບ ທີ່ກຳນົດໄວ້ໃນຂໍ້ 2 ຂອງແຈ້ງການ ສະບັບນີ້, ການກວດກາຍັງຕ້ອງເອົາໃຈໃສ່ຮັບປະກັນ ບໍ່ໃຫ້ມີການຕິດແປດຂອງສັດຕູພືດ ທີ່ເປັນອັນຕະລາຍ (Harmful organism) ທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ I ແລະ II ຂອງ EC Plant Health Directive 2000/29/EC ຂອງສະຫະພາບເອີລົບ ແລະ ຫ້າມບໍ່ໃຫ້ມີດິນ ຫຼື ພັດສະດຸປູກປົນເປື້ອນໄປນຳ.
- ສຳລັບການແຈ້ງຂໍ້ມູນເພີ່ມ (Additional Declaration) ໃນເວລາອອກໃບຢັ້ງຢືນສຸຂານາພືດ ແມ່ນຕ້ອງແຈ້ງສະເພາະພືດ ຫຼື ໝວດພືດໃດໜຶ່ງເທົ່ານັ້ນທີ່ກຳນົດໄວ້ ໃນ ຕາຕະລາງຂ້າງເທິງນັ້ນ (ຕົວຢ່າງ: ໝວດພືດຜັກ 1.1, 1.2 ແລະ 1.3 ຕ້ອງລະບຸ Consignment complies with Annex IV.A.I,point 32.2(b) and 45.2(b) of EC Plant Health Directive 2000/29/EC ໃສ່ໃນຂໍ້ II.ແຈ້ງເພີ່ມເຕີມຖ້າມີ (Additional Declaration) ຂອງໃບຢັ້ງຢືນສຸຂານາໄມພືດ ຕໍ່ 1 ໃບເທົ່ານັ້ນ ).

3. ຂັ້ນຕອນປະຕິບັດອື່ນໆທີ່ຈຳເປັນກ່ອນການສົ່ງອອກພືດທີ່ກຳນົດໄວ້ໃນຂໍ້ 2 ຂອງແຈ້ງການສະບັບນີ້ມີຄື:
   - ຊະນິດຂອງສິນຄ້າ ແລະ ປະລິມານທີ່ລະບຸໃນໃບຢັ້ງຢືນສຸຂານາໄມພືດ ຕ້ອງຖືກກັບຊະນິດ ແລະ ຈຳນວນຕົວຈິງ ທີ່ຈະສົ່ງອອກ.
   - ການອອກໃບຢັ້ງຢືນສຸຂານາໄມພືດ ບໍ່ໃຫ້ກາຍ 14 ວັນ ກ່ອນການສົ່ງອອກ.
   - ໃບຢັ້ງຢືນສຸຂານາໄມພືດທີ່ອອກພາຍຫລັງສົ່ງອອກສິນຄ້າອອກຈາກ ສປປ ລາວ ແລ້ວແມ່ນຖືວ່າບໍ່ຖືກຕ້ອງ.
   - ການນຳເຂົ້າ ພືດ, ຜະລິດຕະພັນພືດ ແລະ ວັດຖຸອື່ນ ຂອງ ສະຫະພາບເອີລົບຕ້ອງມີໃບຢັ້ງຢືນສຸຂານາໄມພືດ ສະບັບແທ້ ຄັດຕິດໄປນຳ.

4. ຫ້າມອອກໃບຢັ້ງຢືນສຸຂານາໄມພືດ ໃຫ້ແກ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸອື່ນ ໃນກຸ່ມສະຫະພາບເອີລົບ ໃນຕາຕະລາງດັ່ງລຸ່ມນີ້:

| ລ/ດ | ພືດ, ຜະລິດຕະພັນພືດ ແລະ ວັດຖຸອື່ນທີ່ຕ້ອງຫ້າມນຳເຂົ້າ | ຂໍ້ຍົກເວັ້ນ |
|---|---|---|
| 1 | ຕົ້ນຂອງພືດຕະກຸນໄມ້ແປກດັ່ງຕໍ່ໄປນີ້:<br>*Abies* spp. *Picea* spp.<br>*Cedrus* spp. *Pinus* spp. (ເຊັ່ນ: ຕົ້ນແປກ)<br>*Chamaecyparis* spp. *Pseudotsuga* spp<br>*Larix* spp. *Tsuga* spp.<br>*Juniperus* spp. | ໝາກ ແລະ ເມັດ |
| 2 | ຕົ້ນ ທີ່ມີໃບ ຂອງພືດໃນຕະກຸນດັ່ງຕໍ່ໄປນີ້:<br>*Castanea* spp. (ເຊັ່ນ: ຕົ້ນໝາກກໍ່ ຫຼື chest nut, chinquapin)<br>*Quercus* spp. ( ເຊັ່ນ: ຕົ້ນໝາກກໍ່ ຫຼື Oak fruit) | ໝາກ ແລະ ເມັດ |
| 3 | ເປືອກທີ່ລອກອອກແລ້ວ (Isolated bark) ຂອງພືດໃນຕະກຸນ<br>*Castanea* spp. (ເຊັ່ນ: ໝາກກໍ່ ຫຼື chest nut, chinquapin) | |
| 4 | ເປືອກທີ່ລອກອອກແລ້ວ (Isolated bark) ຂອງພືດໃນກຸ່ມຂອງຕົ້ນແປກ (Conifers: Coniferales) | |
| 5 | ຕົ້ນພືດສຳລັບນຳໄປປູກ (Plant for planting) ໃນຕະກຸນດັ່ງລຸ່ມນີ້:<br>*Chaenomeles* spp. *Malus* spp. ( ເຊັ່ນ: ຕົ້ນໝາກໂປມ)<br>*Cydonia* spp. *Pyrus* spp.<br>*Crateagus* spp. *Rosa* spp. (ເຊັ່ນ ຕົ້ນກຸຫລາບ)<br>*Prunus* spp.(ເຊັ່ນ: ຕົ້ນໝາກຈອງ)<br>Fragaria spp. (ເຊັ່ນ: ຕົ້ນສະຕໍເບີລີ) | ພືດທີ່ຢູ່ໃນໄລຍະພັກໂຕ (dormant plants) ບໍ່ມີດອກ, ເມັດ ແລະ ໝາກ |
| 6 | ຫົວ (tubers) ແລະ ແນວພັນເປັນຫົວ (Seed potatoes) ຂອງຕົ້ນມັນຝລັ່ງ (*Solanum tuberosum*) | |
| 7 | ພືດເປັນແໜງ (Stolon) ຫລືສ່ວນທີ່ກາຍເປັນຫົວ (tuberforming) ຂອງພືດ ໃນຕະກຸນ *Solanum* spp.( ເຊັ່ນ: ຕົ້ນໝາກເຂືອປ້ອມ, ຕົ້ນມັນຝລັ່ງ) | ຫົວ (tuber) ຂອງມັນຝລັ່ງ (*Solanum tuberosum*) *ໃນຂໍ້ 6* |
| 8 | ຫົວ (tubers) ຂອງພືດໃນຕະກຸນ *Solanum* spp.<br>(ເຊັ່ນ: ຕົ້ນໝາກເຂືອປ້ອມ, ຕົ້ນມັນຝລັ່ງ) | ພືດ ຫຼື ສ່ວນຂອງພືດ ທີ່ອະທິບາຍ ໄວ້ໃນຂໍ້ 6 ແລະ 7 |
| 9 | ຕົ້ນພືດ ນຳໃຊ້ສຳລັບປູກ (Plant of Planting) ໃນຕະກູນ Solanaceae ດັ່ງລຸ່ມນີ້:<br>*Cestrum* spp.<br>*Capsicum* spp. (ເຊັ່ນ: ໝາກເຜັດ)<br>*Lycopersicon* spp. (ເຊັ່ນ: ໝາກເລັ່ນ)<br>*Nicotiana* spp. ( ເຊັ່ນ: ຢາສູບ)<br>*Petunia* spp.,<br>*Solanum* spp. ( ເຊັ່ນ: ໝາກເຂືອ, ມັນຝລັ່ງ ) | ແນວພັນ ແລະ ພືດ ຫຼື ສ່ວນຂອງພືດທີ່ອະທິບາຍໄວ້ໃນຂໍ້ 6, 7 ແລະ 8 |
| 10 | ດິນ ແລະ ພັດສະດຸສຳລັບປູກ (soil and growing media) ເຊັ່ນ ສິ່ງທີ່ປະກອບຂື້ນຈາກດິນທັງໝົດ ຫຼື ມີ ສ່ວນປະສົມຂອງດິນ ຫຼື | ພືດທີ່ຍ່ອຍສະຫຼາຍຈົນໝົດແລ້ວ |

| | | |
|---|---|---|
| | ສານປະກອບອິນຊີທີ່ເປັນທາດແຂງ (Solid organic substance) ເຊັ່ນ: ສ່ວນຂອງພືດ, ພືດ, ຮິວມັສ (Humus) ຫຼື ເປືອກໄມ້ | |
| 11 | ຕົ້ນ ຂອງພືດຕະກຸນ Vitis spp.<br>(ເຊັ່ນ ຕົ້ນໝາກແຮແຂງ ຫລື ໝາກອາງຸ່ນ) | ໝາກ |
| 12 | ຕົ້ນ ແລະ ແນວພັນພືດລູກປະສົມ ຂອງພືດຕະກຸນດັ່ງລຸ່ມນີ້:<br>*Citrus* spp. (ເຊັ່ນ: ຕົ້ນໝາກກ້ຽງ, ຕົ້ນໝາກນາວ, ຕົ້ນໝາກຂີ້ຫູດ)<br>*Fortunella* spp.<br>*Poncirus* spp. | ໝາກ ແລະ ເມັດ |
| 13 | ຕົ້ນສຳລັບນຳໄປປູກ ຂອງພືດໃນຕະກຸນ Graminacae | 1. ເມັດພັນ ຂອງພືດ ໃນຕະກູນ Graminacae<br>2. ພືດໃນຕະກູນຍ່ອຍ Bambusoideae (ເຊັ່ນ: ຕົ້ນໄຜ່ ແລະ ຫວາຍ)<br>3. ພືດໃນຕະກຸນຍ່ອຍ Panicoideae (ເຊັ່ນ: ຕົ້ນທິວສີໄຄ)<br>4. ພືດໃນສະກຸນດັ່ງຕໍ່ໄປນີ້ :<br>*Bouteloua* spp., *Calamagrostis* spp., *Cortaderia* spp., *Glyceria* spp., *Hakonechloa* spp., *Hystrix* spp., *Molinia* spp., *Phalaris* spp., *Shibataea* spp., *Spartina* spp., *Stipa* spp ແລະ *Uniola* spp.<br>ຊຶ່ງເປັນຕົ້ນໄມ້ປະດັບທີ່ມີອາຍຸຫຼາຍກວ່າ 2 ລະດູການ (Perennial) |

**ໝາຍເຫດ:** ໃນກໍລະນີ ບຸກຄົນ ຫຼື ການຈັດຕັ້ງ ທີ່ນຳເຂົ້າພືດ, ຜະລິດຕະພັນພືດ ແລະ ວັດຖຸອື່ນ ທີ່ຕ້ອງຫ້າມຂ້າງເທິງນັ້ນ ເຂົ້າໄປໃນ ສະຫະພາບເອີລົບ ໂດຍມີຈຸດປະສົງ ເພື່ອການສຶກສາ ແລະ ຄົ້ນຄວ້າທົດລອງ ແມ່ນໃຫ້ຂໍໃບອະນຸຍາດນຳເຂົ້າພິເສດ (Special permit ຫຼື letter of authority) ນຳສຳນັກງານທີ່ຮັບຜິດຊອບກ່ຽວກັບວຽກງານສຸຂານາໄມພືດຂອງປະເທດທີ່ຈະນຳເຂົ້າຕາມທີ່ໄດ້ກຳນົດໄວ້ໃນ Commission Directive 95/44/EC ລົງວັນທີ 26/7/1995. ໃນໃບອະນຸຍາດນຳເຂົ້າຈະກຳນົດເງື່ອນໄຂປະຕິບັດ ສຳລັບຊຸດສິນຄ້າ ທີ່ໄດ້ຮັບການຍົກເວັ້ນດັ່ງກ່າວ ແລະ ຫຼັງຈາກ ໄດ້ຮັບໃບອະນຸຍາດແລ້ວຈຶ່ງສາມາດ ອອກໃບຢັ້ງຢືນສຸຂານາໄມພືດ ໂດຍ ແຈ້ງຂໍ້ມູນເພີ່ມ (Additional Declaration)ໃສ່ໃນໃບຢັ້ງຢືນສຸຂານາໄມພືດ ວ່າ: **"This material is imported under Directive 95/44/EC".**

5. ນອກຈາກຂໍ້ມູນ ທີ່ກຳນົດໄວ້ຂ້າງເທິງນັ້ນ, ຜູ້ສົ່ງອອກຕ້ອງຊອກຫາຂໍ້ມູນ ກ່ຽວກັບຂໍ້ກຳນົດທີ່ໄດ້ມີການປະກາດ ແຈ້ງໃນແຕ່ລະໄລຍະເພີ່ມເຕີມດ້ວຍຕົນເອງ ໂດຍສະເພາະພືດ ທີ່ບໍ່ນອນໃນແຈ້ງການສະບັບນີ້, ພ້ອມທັງ ແຈ້ງຂໍ້ມູນດັ່ງກ່າວໃຫ້ ກົມປູກຝັງ ເພື່ອປະສານໄປຍັງປະເທດປາຍທາງ.

6. ມອບໃຫ້ຂະແໜງປູກຝັງນະຄອນຫຼວງ, ແຂວງທົ່ວປະເທດ ຈັດຕັ້ງຜັນຂະຫຍາຍ ໃຫ້ສອດຄ່ອງຕາມ ເນື້ອໃນຂອງແຈ້ງການສະບັບນີ້ ແລະ ເກັບກຳຂໍ້ມູນຕ່າງໆ ທີ່ພົວພັນກັບການຢັ້ງຢືນສຸຂານາໄມພືດ ໃຫ້ກົມປູກຝັງ ຊາບໃນແຕ່ລະໄລຍະເພື່ອດຳເນີນການແກ້ໄຂຢ່າງທັນການ.
7. ລາຍລະອຽດກ່ຽວກັບຊື່ວິທະຍາສາດ ແລະ ຊື່ສາມັນຂອງພືດໃຫ້ເບິ່ງ (1) ປຶ້ມ Jules Vidal, 1956, Noms vernaculaires de Plantes en usage au Laos ແລະ (2) ປຶ້ມບັນຊີລາຍຊື່ພືດຂອງປະເທດລາວ, Mike Callaghan, Vientiane, December 2003 ທີ່ກົມປູກຝັງໄດ້ສຳເນົາໃຫ້ແຕ່ລະດ່ານປ້ອງກັນພືດໃນຂອບເຂດທົ່ວປະເທດແລ້ວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ແລະ ມີປະສິດທິຜົນສູງ.

ຫົວໜ້າກົມປູກຝັງ

ກະຊວງກະສິກຳ ແລະ ປ່າໄມ້ ກົມປູກຝັງ

ດຣ. ມົນທາທິບ ຈັນເພັງໄຊ

<u>ບ່ອນສົ່ງ:</u>
- ລັດຖະມົນຕີວ່າການກະຊວງ ກປ. 1 ສະບັບ (ເພື່ອຊາບ ແລະ ໃຊ້ຕາງລາຍງານ)
- ລັດຖະມົນຕີ ຊ່ວຍວ່າການກະຊວງ ກປ. ທ່ານລະ 1 ສະບັບ (ເພື່ອຊາບ ແລະ ໃຊ້ຕາງລາຍງານ)
- ຫ້ອງການກະຊວງ ກປ. 1 ສະບັບ (ເພື່ອຊາບ ແລະ ໃຊ້ຕາງລາຍງານ)
- ພະແນກ ກປ. ແຂວງ, ນະຄອນ ບ່ອນລະ 1 ສະບັບ (ເພື່ອຊາບ ແລະ ໃຊ້ຕາງລາຍງານ)
- ກົມແຜນການ (ຈຸດສອບຖາມ SPS) 1 ສະບັບເພື່ອຊາບ
- ກົມນະໂຍບາຍການຄ້າຕ່າງປະເທດ (ຈຸດແຈ້ງ SPS) ກະຊວງ ອກຄ. 1 ສະບັບ (ເພື່ອຊາບ ແລະ ໃຊ້ຕາງລາຍງານ)
- ກົມນຳເຂົ້າສົ່ງອອກ, ກະຊວງ ອກຄ. 1 ສະບັບ (ເພື່ອຊາບ ແລະ ໃຊ້ຕາງລາຍງານ)
- ເກັບມ້ຽນ1 ສະບັບ